**ໂຄງການການ ອ່າງຮັບນ້ຳ ທີ່ສາມາດປັບໂຕ ຕໍ່ການປ່ຽນແປງດິນຟ້າອາກາດ (CARBS) ໃນແຂວງ ໄຊຍະບູລີ.**

*ກອບນະໂຍບາຍສິ່ງແວດລ້ອມ ແລະ ສັງຄົມ*

ບົດສັງລວມຫຍໍ້

ສະບັບຮ່າງສົມບູນ

ເດືອນພະຈິກ **2025**

## ສະພາບລວມຂອງໂຄງການ

ໂຄງການ ອົງການກອງທຶນອະນຸລັກທຳມະຊາດໂລກ ໄດ້ຮັບການຈັດສັນຮ່ວງທຶນຂອງກອງທຶນປະເທດດ້ອຍພັດທະນາ ພາຍໃຕ້ກອງທຶນສິ່ງແວດລ້ອມໂລກ ຮອບວຽນທີ່ 8 ສຳລັບ ສປປ ລາວ (WWF-GEF8 Laos LDCF) ຊື່ວ່າ 'ໂຄງການ ອ່າງຮັບນ້ຳທີ່ສາມາດປັບໂຕຕໍ່ດິນຟ້າອາກາດ ແຂວງ ໄຊຍະບູລີ (CARBS)' ມີເປົ້າໝາຍເພື່ອແກ້ໄຂຄວາມທ້າທາຍດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ເພີ່ມຂຶ້ນອັນເນື່ອງມາຈາກການປ່ຽນແປງສະພາບອາກາດໃນແຂວງໄຊຍະບູລີ. ໂຄງການດັ່ງກ່າວມີມູນຄ່າ 6.77 ລ້ານໂດລາ ເຊິ່ງຈະໄດ້ຮັບທຶນຈາກກອງທຶນປະເທດກຳລັງພັດທະນາ (LDCF-8) ຂອງກອງທຶນສິ່ງແວດລ້ອມໂລກ (GEF) ແລະ ດຳເນີນງານຮ່ວມກັນລະຫວ່າງ ກົມຊັບພະຍາກອນນ້ຳ (DWR) ພາຍໃຕ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ (MOAE), ອົງການກອງທຶນອະນຸລັກທຳມະຊາດໂລກ ປະຈຳ ສປປ ລາວ (WWF-Laos) ເປັນຜູ້ຈັດຕັ້ງປະຕິບັດກິດຈະກຳໂຄງການ (Executing Agency) ແລະ ອົງການກອງທຶນອະນຸລັກທຳມະຊາດໂລກ ສະຫະລັດອາເມລິກາ (WWF-US) ເປັນຜູ້ໃຫ້ຄຳແນະນຳດ້ານວິຊາການ ແລະ ງົບປະມານ (Implementing Agency).

ເປົ້າໝາຍຂອງໂຄງການແມ່ນເພື່ອເສີມສ້າງການປັບຕົວຕໍ່ການປ່ຽນແປງສະພາບອາກາດ ແລະ ຄວາມທົນທານຂອງຊຸມຊົນທັງເຂດຕອນເທິງ ແລະ ຕອນລຸ່ມຂອງສາຍນ້ຳໃນແຂວງໄຊຍະບູລີ ຜ່ານການບໍລິຫານຊັບພະຍາກອນນ້ຳແບບປະສົມປະສານ (IWRM), ແນວທາງທີ່ອີງໃສ່ທຳມະຊາດ (NbS), ສິ່ງກໍ່ສ້າງຂະໜາດນ້ອຍແບບດັ້ງເດີມ, ແລະ ການສ້າງວິທີການດຳລົງຊີວິດແບບຫຼາກຫຼາຍຮູບແບບຂອງຊຸມຊົນທ້ອງຖິ່ນໃນພື້ນທີ່ອ່າງຮັບນ້ຳ ນ້ຳປຸຍ, ນ້ຳພູນ, ນ້ຳລາຍ ແລະ ນ້ຳຮຸ່ງ ຂອງ ສປປ ລາວ. ໂຄງການຈະດຳເນີນງານໃນ 4 ອ່າງຮັບນ້ຳສຳຄັນ — ນ້ຳປຸຍ, ນ້ຳພູນ, ນ້ຳລາຍ ແລະ ນ້ຳຮຸ່ງ ເຊິ່ງກວມເອົາ 6 ເມືອງທີ່ມີຄວາມສ່ຽງສູງຕໍ່ຜົນກະທົບຈາກການປ່ຽນແປງສະພາບອາກາດໃນແຂວງໄຊຍະບູລີ. ເປົ້າໝາຍຫຼັກຄື ການເສີມສ້າງຄວາມທົນທານຂອງລະບົບນິເວດ ແລະ ຊຸມຊົນຕໍ່ໄພນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ຄວາມແປປວນ ຂອງອາກາດ ໂດຍຄຽງຄູ່ກັບການສົ່ງເສີມການໃຊ້ທີ່ດິນແບບຍືນຍົງ ແລະ ການອະນຸລັກຄວາມຫຼາກຫຼາຍທາງຊີວະນາໆ ພັນ.

1. ນຳເອົາການປັບຕົວຕໍ່ການປ່ຽນແປງສະພາບອາກາດເຂົ້າໃນແຜນພັດທະນາແຂວງ ແລະ ແຜນຄຸ້ມຄອງອ່າງຮັບນ້ຳ ເປັນວຽກບຸລິມະສິດ.
2. ສົ່ງເສີມການດຳເນີນກິດຈະກຳໂດຍຊຸມຊົນ ໂດຍໃຊ້ແນວທາງທີ່ອີງໃສ່ທຳມະຊາດ (NbS) ແລະ ພື້ນຖານໂຄງລ່າງຂະໜາດນ້ອຍ.
3. ສະໜັບສະໜູນການຮ່ວມອອກແບບກະສິກຳແບບທັນສະໄໝທີ່ທົນທານຕໍ່ສະພາບອາກາດທີ່ປ່ຽນແປງ ແລະ ການດຳລົງຊີວິດທີ່ຫຼາກຫຼາຍ ແລະ ທົນທານ.
4. ສ້າງຄວາມເຂັ້ມແຂງໃນການເກັບກຳ ແລະ ຄຸ້ມຄອງຂໍ້ມູນຄວາມຮູ້, ການສື່ສານ ແລະ ການຮຽນຮູ້ດ້ານນະໂຍບາຍ ເພື່ອການປັບຕົວຕໍ່ສະພາບອາກາດ.

ໂຄງການປະກອບດ້ວຍ 4 ອົງປະກອບ ດັ່ງລຸ່ມນີ້:

ອົງປະກອບ 1 – ການປັບຕົວເຂົ້າກັບດິນຟ້າອາກາດ: ການເຊື່ອມໂຍງແບບປັບຕົວຂອງການປ່ຽນແປງດິນຟ້າອາກາດເຂົ້າໃນແຜນການຄຸ້ມຄອງຊັບພະຍາກອນນໍ້າ ແລະ ແຜນງານຄຸ້ມຄອງອ່າງຮັບນໍ້າ ຂອງແຂວງ.

ອົງປະກອບ 2 – ການຈັດຕັ້ງປະຕິບັດໂດຍຊຸມຊົນ: ຮ່ວມກັນອອກແບບ ແລະ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງຊັບພະຍາກອນນໍ້າ ແລະ ອ່າງຮັບນໍ້າ ໂດຍການມີສ່ວນຮ່ວມຂອງຊຸມຊົນ ເພື່ອແກ້ໄຂຜົນກະທົບດ້ານດິນຟ້າອາກາດ.

ອົງປະກອບ 3 – ການສ້າງຄວາມຢືດຢຸ່ນ: ສົ່ງເສີມທາງເລືອກກະສິກໍາທີ່ສະຫຼາດ ແລະ ການດໍາລົງຊີວິດທີ່ຫຼາກຫຼາຍທີ່ສາມາດປັບຕົວຕໍ່ກັບການປ່ຽນແປງຂອງດິນຟ້າອາກາດ, ໂດຍສະເພາະ ແມ່ນບົດບາດຍິງ-ຊາຍ ທີ່ເພິ່ງພາອາໄສການກະສິກໍາ.

ອົງປະກອບ 4 – ການຄຸ້ມຄອງຂໍ້ມູນຄວາມຮູ້: ເພື່ອການເຜີຍແຜ່ບົດຮຽນ ແລະ ປະສົບການຈາກໂຄງການ ເພື່ອສົ່ງເສີມການຮຽນຮູ້ທີ່ສາມາດປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

ໂຄງການນີ້ຖືກຈັດໃນປະເພດ B ພາຍໃຕ້ການກວດກາດ້ານມາດຕະການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງອົງການກອງທຶນອະນຸລັກທໍາມະຊາດໂລກ (WWF) ເນື່ອງຈາກກິດຈະກໍາທີ່ໃນໂຄງການນີ້ມີຄວາມສ່ຽງໃນລະດັບປານກາງ. ເພື່ອໃຫ້ສອດຄ່ອງກັບນະໂຍບາຍ ແລະ ຂະບວນການ ວຽກງານປົກປ້ອງສິ່ງແວດລ້ອມແບບປະສົມປະສານ ຂອງ WWF (SIPP, 2019) ແລະ ນະໂຍບານດ້ານສິ່ງແວດລ້ອມຂອງ ກອງທຶນສິງແວດລ້ອມໂລກ GEF ແລະ ກອບການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ (Environmental and Social Safeguards – ESSF) ຂອງ WWF, ໂຄງການມີຄວາມຈໍາເປັນຕ້ອງໄດ້ສ້າງ ແລະ ນໍາໃຊ້ ແຜນການຈັດການດ້ານສັງຄົມ ແລະ ສິ່ງແວດລ້ອມ (Environmental and Social Management Framework – ESMF) ເພື່ອຮອງຮັບ ແລະ ແກ້ໄຂຄວາມສ່ຽງ ແລະ ຜົນກະທົບທີ່ໄດ້ລະບຸໄວ້ໃນໄລຍະການກັ່ນກອງຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ. ທັງນີ້ເພື່ອຮັບປະກັນວ່າໂຄງການປະຕິບັດສອດຄ່ອງກັບມາດຕະຖານສໍາຄັນ ເຊັ່ນ ການອະນຸລັກຄວາມຫຼາກຫຼາຍທາງຊີວະນາ ໆ ພັນ, ຄວາມທົນທານຕໍ່ສະພາບອາກາດ ແລະ ການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້–ເສຍ. ESMF ແລະ ເອກະສານປະກອບອື່ນໆ ເຊັ່ນ ກະບວນການປະເມີນ (Process Framework) ແລະ ກອບແຜນຄຸ້ມຄອງຊົນເຜົ່າພື້ນເມືອງ (Indigenous Peoples Framework) ໄດ້ສ້າງມາດຕະການຄຸ້ມຄອງ ເພື່ອຮັບປະກັນການປົກປ້ອງສິ່ງແວດລ້ອມ, ການມີສ່ວນຮ່ວມຂອງສັງຄົມ ແລະ ການຈັດການຄໍາຮ້ອງທຸກຢ່າງໂປ່ງໃສໃນຂະບວນການດໍາເນີນງານໂຄງການ.

**ສະພາບລວມພື້ນທີ່ໂຄງການ**

ພື້ນທີ່ໂຄງການກວມເອົາ 4 ອ່າງຮັບນ້ຳ: ນ້ຳປຸຍ, ນ້ຳພູນ, ນ້ຳລາຍ ແລະ ນ້ຳຮຸ່ງ ເຊິ່ງ ຕັ້ງຢູ່ໃນແຂວງໄຊຍະບູລີ ຂອງ ສປປ ລາວ ເຊິ່ງປະກອບດ້ວຍພື້ນທີ່ທາງທົ່ງພຽງແລະພູເຂົາ. ພື້ນທີ່ປ່າຜະລິດ ແລະ ປ່າອະນຸລັກເປັນບ່ອນທີ່ກວມເອົາ ເນື້ອທີ່ສ່ວນໃຫຍ່ຂອງເນື້ອທີ່ອ່າງຮັບນ້ຳ (ເບິ່ງຮູບ 1). ໂດຍສະເພາະ, ພື້ນທີ່ເຂດປ່າສະຫງວນແຫ່ງຊາດນ້ຳປຸຍ ຄອບ ຄຸມພື້ນທີ່ບາງສ່ວນຂອງອ່າງຮັບນ້ຳນ້ຳປຸຍ ແລະ ນ້ຳລາຍ ແລະ ຄອບຄຸມສ່ວນພື້ນທີ່ສ່ວນໃຫຍ່ຂອງອ່າງຮັບນ້ຳນ້ຳ ພູນ. ພື້ນທີ່ໂຄງການມີລັກສະນະເປັນພື້ນທີ່ພູເຂົາມີລະດັບຄວາມສູງ–ຕ່ຳແຕກຕ່າງກັນຫຼາຍ. ພື້ນທີ່ນີ້ແມ່ນສ່ວນໜຶ່ງ ຂອງລະບົບນິເວນປ່າຝົນເຂດສາຍພູຫຼວງພຣະບາງ ທີ່ພາດຜ່ານທາງທິດເໜືອ–ຕາເວັນຕົກຂອງ ສປປ ລາວ ແລະ ພາກເໜືອຂອງປະເທດໄທ, ໂດຍກວມເອົາເນື້ອທີ່ຫຼາຍກວ່າ 50% ຂອງປ່າທຳມະຊາດໃນພື້ນທີ່ນີ້ຍັງບໍ່ໄດ້ຮັບການ ປົກປັກຮັກສາ. ສະພາບພູເຂົາ ແລະ ພູມີສັນຖານແບບນີ້ມີບົດບາດສຳຄັນຕໍ່ຮູບແບບດິນຟ້າອາກາດຂອງແຂວງ. ສະພາບອາກາດຂອງແຂວງໄຊຍະບູລີແມ່ນເປັນເຂດຮ້ອນຊຸ່ມ ເຊິ່ງ ໄດ້ຮັບອິດທິພົນຈາກລົມມໍລະສຸມ ແລະ ມັກເກີດ ຜົນກະທົບຈາກຝົນຕົກໃນເຂດພູເຂົາຢ່າງຮຸນແຮງ. ສະພາບຂອງອ່າງຮັບນ້ຳແມ່ນຢູ່ໃກ້ກັບແມ່ນ້ຳຂອງ ແລະ ແມ່ນ້ຳ ສາຂາ ຈຶ່ງກໍ່ໃຫ້ເກີດສ່ຽງຕໍ່ການເກີດນ້ຳຖ້ວມ.

ພ້ອມດຽວກັນນັ້ນ, ໂຄງການຕັ້ງຢູ່ໃນພື້ນທີ່ທີ່ມີຄວາມສ່ຽງສູງຕໍ່ສະພາບອາກາດ, ເປັນພື້ນທີ່ເກີດນ້ຳຖ້ວມຕາມທຳ ມະຊາດ ແລະ ເປັນເຂດພູເຂົາ. ພື້ນທີ່ນີ້ໄດ້ຖືກເລືອກເນື່ອງຈາກມີຄວາມສ່ຽງສູງຕໍ່ຜົນກະທົບຈາກການປ່ຽນແປງ ສະພາບອາກາດ. ຜົນກະທົບເກີດຂຶ້ນເນື່ອງມາຈາກການເພິ່ງພາກະສິກຳຢ່າງຫຼາຍ ແລະ ປະຊາກອນສ່ວນໃຫຍ່ອາໄສ ຢູ່ໃນພື້ນທີ່ຊົນນະບົດ; ກຸ່ມຊົນເຜົ່າຜູ້ດ້ອຍໂອກາດທີ່ອາໃສໃນເຂດພູສູງ ຈຳນວນຫຼາຍ ທີ່ອາໄສການຜະລິດແບບພໍ ພຽງ ແລະ ກະສິກຳແບບບໍ່ຄົງທີ່; ອັດຕາຄວາມທຸກຍາກສູງກວ່າສະເລ່ຍໃນລະດັບຊາດ; ຄວາມບອບບາງຕໍ່ຜົນ ກະທົບ ແລະ ຄວາມສ່ຽງສູງຈາກນ້ຳຖ້ວມໃນພື້ນທີ່ຕ່ຳຂອງອ່າງຮັບນ້ຳ, ຕະຫຼອດຈົນເຖິງຄວາມສ່ຽງຈາກໄພ ແຫ້ງແລ້ງ ແລະ ສະພາບອາກາດ ທີ່ມີການປ່ຽນແປງໃນແຕ່ລະດູການ; ຮວມທັງການຂາດແຄນຊັບພະຍາກອນ ແລະ ໂຄງລ່າງພື້ນຖານທີ່ຈຳເປັນຕໍ່ການປັບຕົວ ແລະ ຟື້ນຟູຈາກຄວາມສ່ຽງຈາກການປ່ຽນແປງສະພາບອາກາດ.




ຮູບທີ 1: ແຜນທີ່ທີ່ຕັ້ງໂຄງການ

## ຊົນເຜົ່າໃນເນື້ອທີ່ໂຄງການ

ສປປ ລາວ ແມ່ນປະເທດທີ່ມີຄວາມຫຼາກຫຼາຍທາງຊົນເຜົ່າຫຼາຍທີ່ສຸດໃນຂົງເຂດແຜ່ນດິນໃຫຍ່ ຂອງພາກພື້ນອາຊີຕາເວັນອອກສ່ຽງໃຕ້. ຊົນເຜົ່າລາວລຸ່ມກວມເອົາສັດສ່ວນປະມານ 62% ຂອງປະຊາກອນ ແລະ ເປັນກຸ່ມທີ່ມີອິດທິພົນທາງວັດທະນະທຳ ແລະ ເສດຖະກິດ. ໃນຫຼາຍແຂວງ ແລະ ເມືອງ, ຊົນເຜົ່າສ່ວນນ້ອຍ ຈະກວມສັດສ່ວນໃຫຍ່ ແລະ ວັດທະນະທຳຂອງເຂົາເຈົ້າປະກົດໃຫ້ເຫັນຢ່າງໂດດເດັ່ນ. ລັດຖະບານລາວໄດ້ຮັບຮອງ 49 ຊົນເຜົ່າ ເປັນທາງການ ໂດຍແບ່ງອອກເປັນ 4 ກຸ່ມຕາມຕະກູນພາສາ: ລາວ–ໄຕ, ມອນ–ຂະແມ, ມົ້ງ–ມ້ຽນ ແລະ ຈີນ–ຕິເບດ. ໂດຍລວມ, ຊົນເຜົ່າສ່ວນນ້ອຍຄິດເປັນປະມານ 37% ຂອງປະຊາກອນທັງໝົດຂອງປະເທດ. ເຖິງຢ່າງໃດກໍຕາມ, ແທນທີ່ຈະໃຊ້ຄຳວ່າ "ຊົນເຜົ່າພື້ນເມືອງ" ຫຼື "ຊົນເຜົ່າສ່ວນນ້ອຍ", ລັດຖະທຳມະນູນຂອງສປປ ລາວ ໃຊ້ຄຳວ່າ "ບັນດາຊົນເຜົ່າ" ຫຼື "ຊົນເຜົ່າທັງໝົດ" ເພື່ອອ້າງອີງເຖິງຄວາມຫຼາກຫຼາຍເຜົ່າຂອງປະຊາກອນ, ໃນຂະນະທີ່ຊື່ຂອງແຕ່ລະຊົນເຜົ່າຖືກນຳໃຊ້ເພື່ອຈັດປະເພດກຸ່ມຊົນເຜົ່າ. ບັນດາຊົນເຜົ່າສ່ວນໃຫຍ່ ໃນສປປ ລາວ ຍັງຢູ່ໃນສະພາບທຸກຍາກ ແລະ ດ້ອຍໂອກາດ, ແລະ ສະພາບເສດຖະກິດຂອງພວກເຂົາຍັງຕໍ່າກ່ວາ ເຜົ່າລາວລຸ່ມ ໃນຫຼາຍດ້ານ, ໂດຍສະເພາະອັດຕາຄວາມທຸກຍາກ, ອັດຕາການອ່ານອອກ–ຂຽນໄດ້ ແລະ ສຸຂະພາບ.

ໃນບ້ານເປົ້າໝາຍຂອງໂຄງການ ອ່າງຮັບນໍ້າທີ່ສາມາດປັບໂຕ ຕໍ່ການປ່ຽນແປງດິນຟ້າອາກາດ (CARBS), ປະຊາກອນສ່ວນໃຫຍ່ໃນພື້ນທີ່ໂຄງການແມ່ນເຜົ່າລາວລຸ່ມ; ຢ່າງໃດກໍຕາມ, ຍັງມີຊົນເຜົ່າອື່ນໆ ເຊັ່ນ ຊົນເຜົ່າປຣາຍ, ກຶມມຸ, ມົ້ງ, ລູ້ມ້ຽນ ແລະ ຢວນ ອາໄສຢູ່ໃນພື້ນທີ່ນີ້ດ້ວຍ.

## ນະໂຍບາຍ, ກົດໝາຍ ແລະ ແນວທາງດ້ານສິ່ງແວດລ້ອມ ແລະ ສັງຄົມ

ມີກົດໝາຍ ແລະ ກົດລະບຽບ ຂອງສປປ ລາວ ຈຳນວນໜຶ່ງ ພ້ອມທັງ ESSF ແລະ SIPP (Safeguards Integrated Policies and Procedures: ນະໂຍບາຍ ແລະ ຂັ້ນຕອນວຽກງານການປົກປ້ອງແບບເຊື່ອມສານ) ຂອງ WWF ທີ່ສາມາດນຳໃຊ້ກັບໂຄງການອ່າງຮັບນໍ້າທີ່ສາມາດປັບໂຕ ຕໍ່ການປ່ຽນແປງດິນຟ້າອາກາດ (CARBS) ໄດ້. ກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງສຳຄັນຂອງປະເທດລາວ ແລະ ນະໂຍບາຍຂອງ GEF ແລະ WWF ໄດ້ລະບຸໄວ້ໃນຕາຕະລາງທີ 1 ຂ້າງລຸ່ມນີ້.

**ຕາຕະລາງ 1: ກົດໝາຍ, ຂໍ້ກຳນົດ ແລະ ນະໂຍບາຍສຳຄັນ**

| ຫົວການ | ກົດໝາຍ ແລະ ລະບຽບການຂອງລາວ | ລະບຽບການຂອງ GEF ແລະ WWF |
|---|---|---|
| ກົດໝາຍປົກປັກຮັກສາສິ່ງແວດລ້ອມ | ກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (2012) | 1. ມາດຕະຖານການຈັດການຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ |
| | ກົດໝາຍປ່າໄມ້ (ປັບປຸງ 2019) | |

| | | |
|---|---|---|
| ແລະ ອະນຸລັກຊີວະ ນາໆ ພັນ | ກົດໝາຍວ່າດ້ວຍສັດປ່າ ແລະ ສັດນ້ຳ (ປັບປຸງ2023) | 2. ມາດຕະຖານການປົກປ້ອງທີ່ຢູ່ອາໄສຂອງສັດປ່າ<br>3. ມາດຕະຖານການຈຳກັດການເຂົ້າເຖິງ ແລະ ການຍ້າຍຖິ່ນຖານ<br>4. ມາດຕະຖານດ້ານສຸຂະພາບ, ຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຊຸມຊົນ<br>5. ມາດຕະຖານຊົນເຜົ່າພື້ນເມືອງ<br>6. ມາດຕະຖານການຈັດການສັດຕູພືດ<br>7. ມາດຕະຖານຊັບພະຍາກອນທາງວັດທະນະທຳ<br>8. ມາດຕະຖານກອບການຄຸ້ມຄອງການຮ້ອງທຸກ<br>9. ມາດຕະຖານການປຶກສາຫາລື ແລະ ການເຜີຍແຜ່ຂໍ້ມູນ<br>10. ມາດຕະຖານກ່ຽວກັບການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້–ເສຍ<br>11. ຄຳແນະນຳກ່ຽວກັບຄວາມຮຸນແຮງຕໍ່ເພດ ແລະ ການຂົ່ມເຫັງ, ການຂົ່ມເຫັງທາງເພດ ແລະ ການລ່ວງລະເມີດ<br>12. ຄຳແນະນຳກ່ຽວກັບການໃຊ້ແຮງງານ ແລະ ເງື່ອນໄຂການເຮັດວຽກ<br>13. ຄຳແນະນຳກ່ຽວກັບໂຄງການທີ່ກ່ຽວຂ້ອງກັບເຂື່ອນ<br>14. ຄຳແນະນຳກ່ຽວກັບຫຼັກການການເຮັດວຽກຂອງພະນັກງານລາດຕະເວນ |
| | ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ (ປັບປຸງ 2017) | |
| ກົດໝາຍວ່າດ້ວຍ ການຄຸ້ມຄອງແຮງ ງານ | ກົດໝາຍແຮງງານ (2013) | |
| | ດຳລັດວ່າດ້ວຍສຸຂະພາບ ແລະ ຄວາມປອດໄພດ້ານແຮງງານ (2019) | |
| | ກົດໝາຍວ່າດ້ວຍສຸຂາອະນາໄມ, ປ້ອງກັນພະຍາດ ແລະ ສົ່ງເສີມສຸຂະພາບ (2019) | |
| ຊົນເຜົ່າ | ລັດຖະທຳມະນູນ ສປປ ລາວ (ປັບປຸງ 2015): | |
| | ດຳລັດວ່າດ້ວຍວຽກງານຊົນເຜົ່າ (2020) | |
| | ມະຕິວ່າດ້ວຍວຽກງານຊົນເຜົ່າໃນຍຸກໃໝ່(1992) | |
| ເພດ, ຄວາມຮຸນແຮງ ທາງເພດ, ແລະ ການ ຄຸກຄາມທາງເພດ | ກົດໝາຍວ່າດ້ວຍການປ້ອງກັນ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ (2014) | |
| | ກົດໝາຍວ່າດ້ວຍການພັດທະນາ ແລະ ສົ່ງເສີມແມ່ຍິງ ແລະ ເດັກນ້ອຍ (2004) | |
| | ກົດໝາຍຕໍ່ຕ້ານການຄ້າມະນຸດ (2015) | |
| ການມີສ່ວນຮ່ວມ ຂອງຊຸມຊົນ | ຂໍ້ຕົກລົງການຮັບຮອງ ແລະ ບັງຄັບໃຊ້ບົດແນະນຳວ່າດ້ວຍການມີສ່ວນຮ່ວມຂອງສາທາລະນະໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (2013) | |
| | ກົດໝາຍວ່າດ້ວຍການຄຸ້ມຄອງການຮ້ອງທຸກ (2015) | |
| | ບົດແນະນຳວ່າດ້ວຍການປຶກສາຫາລືກັບຊົນເຜົ່າ (2012) | |

ເພື່ອຈຸດປະສົງຂອງໂຄງການອ່າງຮັບນ້ຳທີ່ສາມາດປັບໂຕ ຕໍ່ການປ່ຽນແປງດິນຟ້າອາກາດ (CARBS), ບັນດາຂໍ້ກຳນົດຂອງ ESSF ແລະ SIPP ຂອງ WWF ຈະມີຜົນບັງຄັບເໜືອກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງຂອງລາວ ໃນທຸກກໍລະນີທີ່ມີຊ່ອງຫວ່າງດ້ານຫຼັກການ.

### ຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ສັງຄົມ

ແຜນການຈັດການດ້ານສັງຄົມ ແລະ ສິ່ງແວດລ້ອມ (ESMF) ກຳນົດໃຫ້ ໂຄງການຢູ່ໃນປະເພດ B ເນື່ອງຈາກ

ຄວາມສ່ຽງລະດັບປານກາງທີ່ກ່ຽວຂ້ອງກັບການພັດທະນາໂຄງລ່າງພື້ນຖານຂະໜາດນ້ອຍ, ຂໍ້ຈຳກັດໃນການເຂົ້າເຖິງຊັບພະຍາກອນ, ແລະ ຄວາມອ່ອນໄຫວທີ່ອາດເກີດຂື້ນຕໍ່ກຸ່ມຍິງ-ຊາຍ ຫຼື ຊົນເຜົ່າ. ຄວາມສ່ຽງຫຼັກໆ ລວມມີ: ການລົບກວນທີ່ຢູ່ອາໄສຂອງສິ່ງມີຊີວິດ, ການຕົກຕະກອນ, ການເຂົ້າເຖິງຜົນປະໂຫຍດຈາກໂຄງການທີ່ບໍ່ສະເໝີພາບ, ແລະ ຄວາມສ່ຽງດ້ານການຂູດຮີດ, ລ່ວງລະເມີດ, ແລະ ການຄຸກຄາມທາງເພດ.

**ຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ມາດຕະການຫຼຸດຜ່ອນ**

ໂຄງການນີ້ປະກອບມີ 4 ອົງປະກອບ, ແລະ ຜົນກະທົບດ້ານລົບຕໍ່ສິ່ງແວດລ້ອມທີ່ອາດເກີດຂື້ນຈະແຕກຕ່າງກັນໄປ, ຂຶ້ນກັບກິດຈະກຳໃນແຕ່ລະອົງປະກອບ. ອີງຕາມການອອກແບບໂຄງການ, ສາມາດສັງເກດເຫັນວ່າຄວາມສ່ຽງດ້ານສິ່ງແວດລ້ອມທີ່ຄາດວ່າຈະເກີດຂື້ນສ່ວນໃຫຍ່ແມ່ນກ່ຽວຂ້ອງກັບການພັດທະນາໂຄງລ່າງພື້ນຖານຂະໜາດນ້ອຍພາຍໃຕ້ອົງປະກອບທີ 2, ໃນຂະນະທີ່ຄວາມສ່ຽງດ້ານສິ່ງແວດລ້ອມຈາກອົງປະກອບອື່ນ ຄາດວ່າຈະຢູ່ໃນລະດັບຕ່ຳເນື່ອງຈາກເປັນກິດຈະກຳທີ່ບໍ່ແມ່ນການກໍ່ສ້າງ.    ບົດສັງລວມກ່ຽວກັບກິດຈະກຳທີ່ຄາດວ່າຈະເກີດຄວາມສ່ຽງດ້ານສິ່ງແວດລ້ອມ ແລະ ມາດຕະການຫຼຸດຜ່ອນແມ່ນໄດ້ອະທິບາຍໄວ້ໃນຕາຕະລາງທີ 2 ຂ້າງລຸ່ມນີ້.

ຕາຕະລາງ 2: ສັງລວມຄວາມສ່ຽງດ້ານສິ່ງແວດລ້ອມ, ມາດຕະການຫຼຸດຜ່ອນ ແລະ ການຕິດຕາມກວດກາ

| ມາດຕະຖານ ດ້ານ ສິ່ງແວດລ້ອມ | ຄວາມສ່ຽງ | ມາດຕະການຫຼຸດຜ່ອນ | ຕົວຊີ້ວັດການ ຕິດຕາມກວດກາ |
|---|---|---|---|
| ແຫຼ່ງທີ່ຢູ່ທຳມະຊາດ | ການພັດທະນາໂຄງລ່າງພື້ນຖານຂະໜາດນ້ອຍເຊັ່ນ: ຝາຍຊົນລະປະທານ ແລະ ການສ້າງລະບົບນ້ຳບາດານ ໃຫ້ຊຸມຊົນອາດຈະສ້າງຜົນກະທົບດ້ານລົບຕໍ່ແຫຼ່ງທີ່ຢູ່ອາໄສທຳມະຊາດ ຖ້າຫາກບໍ່ມີການວາງແຜນທີ່ດີ. | ຈະຕ້ອງໄດ້ດຳເນີນການປະເມີນຜົນກະທົບເບື້ອງຕົ້ນຈາກໂຄງລ່າງພື້ນຖານຕໍ່ກັບແຫຼ່ງທີ່ຢູ່ອາໄສຂອງສັດປ່າ ແລະ ສັດນ້ຳ ເພື່ອຫຼຸດຜ່ອນຜົນກະທົບ ໃນໄລຍະຈັດຕັ້ງປະຕິບັດໂຄງການ | ການປະເມີນແບບເລັ່ງລັດ ສຳລັບສະຖານທີ່ຈະສ້າງໂຄງລ່າງພື້ນຖານ |

**ຄວາມສ່ຽງດ້ານສັງຄົມ ແລະ ວັດທະນະທຳ ແລະ ມາດຕະການບັນເທົາ**

ການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ, ລວມທັງການວາງແຜນການນຳໃຊ້ທີ່ດິນ ແລະ ນ້ຳ ທີ່ຂັບເຄື່ອນໂດຍຊຸມຊົນ, ການລົງທຶນຊ່ວຍເຫຼືອທີ່ອີງໃສ່ທຳມະຊາດ ແລະ ການຟື້ນຟູລະບົບນິເວດ, ອາດຈະຈຳກັດການເຂົ້າເຖິງຊັບພະຍາກອນທີ່ດິນ, ນ້ຳ ແລະ ປ່າໄມ້ຂອງປະຊາຊົນທ້ອງຖິ່ນ. ນອກຈາກນີ້, ການພັດທະນາໂຄງລ່າງພື້ນຖານ ອາດຈະນຳໄປສູ່ການນຳໃຊ້ທີ່ດິນ ແລະ ນ້ຳ ແບບໃໝ່, ທີ່ຂັດຕໍ່ລະບົບດັ້ງເດີມ ຫຼື ກໍ່ໃຫ້ເກີດຄວາມບໍ່ສະເໝີພາບໃນການເຂົ້າເຖິງຊັບພະຍາກອນ. ບົດສະຫຼຸບກ່ຽວກັບກິດຈະກຳ, ຄວາມສ່ຽງ ແລະ ຜົນກະທົບທາງສັງຄົມຫຼັກ ທີ່ຄາດວ່າຈະເກີດຂຶ້ນ ແລະ ມາດຕະການຫຼຸດຜ່ອນ ໄດ້ຖືກອະທິບາຍໄວ້ໃນຕາຕະລາງທີ 3 ຂ້າງລຸ່ມນີ້.

ຕາຕະລາງ 3: ສັງລວມຄວາມສ່ຽງທາງສັງຄົມ, ມາດຕະການຫຼຸດຜ່ອນ ແລະ ການຕິດຕາມກວດກາ

| **ມາດຕະຖານດ້ານສັງຄົມ** | **ຄວາມສ່ຽງ** | **ມາດຕະການຫຼຸດຜ່ອນ** | **ຕົວຊີ້ວັດໃນການ ຕິດຕາມກວດກາ** |
|---|---|---|---|
| ວຽກຊົນເຜົ່າ | ການລະເລີຍ ຫລື ການລະເມີດສິດທິຂອງຊົນເຜົ່າໃນຂະບວນການຕັດສິນບັນຫາ | ສ້າງແຜນ IPPF, ລວມເຖິງການຂໍຄວາມເຫັນດີເຫັນພ້ອມ, ດ້ວຍຄວາມສະໝັກໃຈ ໂດຍຮັບຮູ້ຂໍ້ມູນລ່ວງໜ້າ(FPIC) ໃນກິດຈະກຳຕ່າງໆ ທີ່ອາດຈະສົ່ງຜົນກະທົບຕໍ່ສິດທິຂອງປະຊາຊົນທີ່ເປັນເຜົ່າສ່ວນນ້ອຍ ໂດຍສອດຄ່ອງກັບ ສົນທິສັນຍາ ຊົນເຜົ່າ ແລະ | ຈຳນວນການຍິນຍອມ ແລະ ຄຳຄິດເຫັນທີ່ໄດ້ຮັບ |

| | | | |
|---|---|---|---|
| | | ຊົນເຜົ່າພື້ນເມືອງ (ILO 169) ແລະ UNDRIP: **United Nations Declaration on the Rights of Indigenous Peoples** (ປົດຖະແຫຼງການຂອງອົງການສະຫະປະຊາຊາດ ວ່າດ້ວຍ ສິດທິຂອງຊົນເຜົ່າພື້ນເມືອງ). | |
| ຄວາມເທົ່າທຽມທາງເພດ ແລະ ສິດທິຂອງແມ່ຍິງ | ຂາດການມີສ່ວນຮ່ວມຂອງແມ່ຍິງໃນຂະບວນການຕັດສິນໃຈ | ນຳໃຊ້ວິທີການປຶກສາຫາລືທີ່ມີສິດເທົ່າທຽມທາງເພດ ແລະ ເໝາະສົມທາງວັດທະນະທຳ; ແລະ ຮັບປະກັນການມີສ່ວນຮ່ວມທີ່ຫຼາກຫຼາຍດ້ານອາຍຸ ແລະ ເພດ | % ຂອງຜູ້ເຂົ້າຮ່ວມກຸ່ມເປົ້າໝາຍ; ຄຳຄິດເຫັນ |
| ການຈຳກັດການເຂົ້າເຖິງ ແລະ ການຍ້າຍຖິ່ນຖານ | ການຈຳກັດການເຂົ້າເຖິງທີ່ດິນ, ປ່າໄມ້, ຫຼື ນ້ຳ ເນື່ອງຈາກແຜນງານຟື້ນຟູປ່າໄມ້ ຫຼື ມາດຕະການຊ່ວຍເຫຼືອທີ່ອີງໃສ່ທຳມະຊາດ | ສ້າງເອກະສານແນວທາງຂະບວນການ; ດຳເນີນການກຳນົດເຂດທີ່ດິນ/ຊັບພະຍາກອນແບບມີສ່ວນຮ່ວມ; ນຳໃຊ້ຫຼັກການ FPIC; ສ້າງຂໍ້ຕົກລົງການແບ່ງປັນຜົນປະໂຫຍດ; ກຳນົດສິດທິທາງປະເພນີ, ວິເຄາະຜົນກະທົບຕໍ່ການດຳລົງຊີວິດ, ແລະ ພັດທະນາຂໍ້ຕົກລົງກ່ຽວກັບມາດຕະການບັນເທົາ ແລະ ການຊົດເຊີຍຖ້າຈຳເປັນ | % ຂອງການປະຕິບັດ FPIC ສຳເລັດ; ຄຳຮ້ອງທີ່ໄດ້ຮັບການແກ້ໄຂ |

| | | | |
|---|---|---|---|
| ສຸຂະພາບ, ຄວາມປອດໄພ ແລະ ການຮັກສາຄວາມປອດໄພຂອງຊຸມຊົນ | ໂຄງລ່າງພື້ນຖານ ແລະ ການຈັດການປ່າຕົ້ນນໍ້າ ອາດສົ່ງຜົນກະທົບຕໍ່ຊຸມຊົນ, ລວມທັງຊຸມຊົນທາງລຸ່ມນໍ້າ, ດ້ານສຸຂະພາບ, ຄວາມປອດໄພ ແລະ ການຮັກສາຄວາມປອດໄພ; ຄວາມຂັດແຍ່ງລະຫວ່າງມະນຸດ ແລະ ສັດປ່າທີ່ສົ່ງຜົນກະທົບຕໍ່ສະມາຊິກຊຸມຊົນໃນເວລາຈັດຕັ້ງປະຕິບັດໂຄງລ່າງ | ການຈັດຕັ້ງປະຕິບັດມາດຕະການບັນເທົາທີ່ໄດ້ອະທິບາຍໄວ້ໃນຕາຕະລາງ 3 | |
| ຊັບພະຍາກອນທາງດ້ານກາຍະພາບ ແລະ ວັດທະນະທໍາ | ການຈັດຕັ້ງປະຕິບັດກິດຈະກໍາໃນພື້ນທີ່ທີ່ມີຊັບພະຍາກອນທາງດ້ານກາຍະພາບ ແລະ ວັດທະນະທໍາ ຈະຖືກກໍານົດໃນຂະບວນການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ເສຍ ແລະ FPIC | ຈະຖືກກໍານົດໃນພາຍຫຼັງ | ຈະຖືກກໍານົດໃນພາຍຫຼັງ |
| ຄວາມອ່ອນໄຫວດ້ານຄວາມຂັດແຍ່ງ | ການເຂົ້າເຖິງການຝຶກອົບຮົມ, ເຄື່ອງມື, ຫຼື ຕະຫຼາດທີ່ບໍ່ສະເໝີພາບ, ໂດຍສະເພາະສໍາລັບກຸ່ມທີ່ຢູ່ຫ່າງໄກສອກຫຼີກ ຫຼື ກຸ່ມດ້ອຍໂອກາດ | ນໍາໃຊ້ການກໍານົດເປົ້າໝາຍທີ່ກວມເອົາທຸກກຸ່ມຄົນ; ປັບການຝຶກອົບຮົມໃຫ້ເໝາະສົມກັບສະພາບທ້ອງຖິ່ນ; ແລະ ໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງແກ່ກຸ່ມທີ່ອ່ອນໄຫວ | ອັດຕາສ່ວນຜູ້ເຂົ້າຮ່ວມຝຶກອົບຮົມທີ່ເປັນແມ່ຍິງ/ຊົນເຜົ່າ; ຜົນການສໍາຫຼວດຄວາມພໍໃຈ |
| ການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ເສຍ | ການພະຍາກອນດິນຟ້າອາກາດ ແລະ ເຄື່ອງມືເຕືອນໄພລ່ວງໜ້າບໍ່ສາມາດໄປຮອດຊຸມຊົນທີ່ຫ່າງໄກສອກຫຼີກ ຫຼື ຊຸມຊົນທີ່ອ່ານໜັງສືບໍ່ໄດ້ | ນໍາໃຊ້ພາສາທ້ອງຖິ່ນ, ເຄື່ອງມືທາງສາຍຕາ, ແລະ ຊ່ອງທາງຊຸມຊົນທີໜ້າເຊື່ອຖືເພື່ອການເຜີຍແຜ່ທີ່ມີປະສິດທິພາບ | ອັດຕາສ່ວນຂອງຄົວເຮືອນເປົ້າໝາຍທີ່ໄດ້ຮັບຂໍ້ມູນ; ຂໍ້ມູນການສົ່ງຕໍ່ກັບຄືນກ່ຽວກັບຄວາມເປັນປະໂຫຍດ |

**ກອບຂະບວນການປະເມີນຜົນກະທົບ**

ເອກະສານກອບຂະບວນການປະເມີນຜົນກະທົບ (Process Framework - PF) ແມ່ນຖືກກະກຽມຂຶ້ນໃນກໍລະນີທີ່ ໂຄງການ ອ່າງຮັບນໍ້າທີ່ສາມາດປັບໂຕ ຕໍ່ການປ່ຽນແປງດິນຟ້າອາກາດ (CARBS) ອາດກໍ່ໃຫ້ເກີດການຈຳກັດການເຂົ້າເຖິງຊັບພະຍາກອນທຳມະຊາດໃນພື້ນທີ່ສວນອຸທິຍານ ແລະ ເຂດອະນຸລັກທີ່ກຳນົດໄວ້ໂດຍກົດໝາຍ. ຈຸດປະສົງຂອງເອກະສານດັ່ງກ່າວ ແມ່ນເພື່ອສ້າງຕັ້ງຂະບວນການທີ່ສະມາຊິກຊຸມຊົນທີ່ອາດເປັນຜູ້ໄດ້ຮັບຜົນກະທົບໄດ້ມີສ່ວນຮ່ວມໃນການອອກແບບກິດຈະກຳຂອງໂຄງການ, ການກຳນົດມາດຕະການທີ່ຈຳເປັນເພື່ອຕອບສະໜອງຂໍ້ກຳນົດຂອງ ESSF ແລະ SIPP, ແລະ ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາກິດຈະກຳໂຄງການທີ່ກ່ຽວຂ້ອງ. ການປ່ຽນແປງ ແລະ ຜົນກະທົບໃດໆ ທີ່ເກີດຂຶ້ນຕໍ່ການນຳໃຊ້ທີ່ດິນ ແລະ ການຍ້າຍຖິ່ນຖານຂອງປະຊາຊົນ ຍ້ອນອີງປະກອບ ແລະ ກິດຈະກຳຕ່າງໆ ຂອງໂຄງການ ຄວນອີງໃສ່ການປຶກສາຫາລືທີ່ເປັນເອກະລາດ, ມີຂໍ້ມູນກ່ອນລ່ວງໜ້າ, ແລະ ເປີດເຜີຍຢ່າງເໝາະສົມກັບຊຸມຊົນທີ່ໄດ້ຮັບຜົນກະທົບ ແລະ ອຳນາດການປົກຄອງທີ່ກ່ຽວຂ້ອງ, ເຊິ່ງຄວນດຳເນີນການກ່ອນທີ່ ການປ່ຽນແປງຮູບແບບການນຳໃຊ້ຊັບພະຍາກອນໃດໆ ຈະໄດ້ຮັບການຮັບຮອງ.

ລະດັບລາຍລະອຽດຂອງເອກະສານແນວທາງຂະບວນການ ອາດຈະແຕກຕ່າງກັນໄປ ຂຶ້ນກັບກິດຈະກຳຂອງໂຄງການ, ລັກສະນະຂອງຂໍ້ຈຳກັດ ແລະ ຜົນກະທົບຂອງມັນ, ແລະ ຈຳນວນປະຊາຊົນທີ່ໄດ້ຮັບຜົນກະທົບ. ເອກະສານແນວທາງຂະບວນການ ເປັນສ່ວນເສີມໃຫ້ແກ່ການປະເມີນດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ ດ້ວຍກົນໄກການມີສ່ວນຮ່ວມທີ່ເນັ້ນໃສ່ຜົນກະທົບທີ່ອາດເກີດຈາກຂໍ້ຈຳກັດການເຂົ້າເຖິງຊັບພະຍາກອນ.

ໂຄງການຈະຕ້ອງຮັບປະກັນວ່າ ເອກະສານກອບຂະບວນການປະເມີນຜົນກະທົບ PF ກວມເອົາອົງປະກອບຕໍ່ໄປນີ້:

- ພື້ນຖານຂໍ້ມູນຂອງໂຄງການ
- ການຈັດຕັ້ງປະຕິບັດແບບມີສ່ວນຮ່ວມ
- ຜົນກະທົບທີ່ອາດເກີດຂຶ້ນ
- ເງື່ອນໄຂຄວາມຖືກຕ້ອງ
- ມາດຕະການເພື່ອຊ່ວຍເຫຼືອຜູ້ຖືກຜົນກະທົບ ໃຫ້ປັບປຸງການດຳລົງຊີວິດ
- ການແກ້ໄຂຂໍ້ຂັດແຍ່ງ ແລະ ກົນໄກການຮ້ອງທຸກ
- ການຈັດຕັ້ງປະຕິບັດ ແລະ ການຈັດການຕິດຕາມກວດກາ

**ແຜນກອບການວາງແຜນສໍາລັບຊົນເຜົ່າພື້ນເມືອງ (IPPF)**

ດັ່ງທີ່ໄດ້ກ່າວມາຂ້າງເທິງ ປະຊາກອນສ່ວນໃຫຍ່ໃນພື້ນທີ່ໂຄງການເປັນກຸ່ມຊົນເຜົ່າທີ່ໃຊ້ພາສາລາວ; ເຖິງຢ່າງໃດກໍ່ຕາມ, ຍັງມີກຸ່ມຊົນເຜົ່າສ່ວນນ້ອຍຈໍານວນຫນຶ່ງ, ລວມທັງກຸ່ມໄປຼ, ຂະມຸ, ມົ້ງ, ແລະ ອິວມ້ຽນ, ທີ່ດໍາລົງຊີວິດຢູ່ໃນພື້ນທີ່ນັ້ນດ້ວຍ, ດັ່ງທີ່ໄດ້ລະບຸໄວ້ໃນຕາຕະລາງທີ 2 ຂ້າງເທິງ. ເຖິງແມ່ນວ່າໂຄງການ CARBS ມີຈຸດປະສົງທີ່ຈະສ້າງຜົນປະໂຫຍດໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງແລະຊຸມຊົນທ້ອງຖິ່ນ, ລວມທັງກຸ່ມຊົນເຜົ່າສ່ວນນ້ອຍ, ໂຄງການນີ້ກໍ່ອາດກໍ່ໃຫ້ເກີດຜົນກະທົບດ້ານສັງຄົມໃນດ້ານລົບຈໍານວນຫນຶ່ງທີ່ສາມາດຫຼຸດຜ່ອນໄດ້. ຜົນກະທົບເຫຼົ່ານີ້ລວມມີ: ໂອກາດທີ່ບໍ່ເທົ່າທຽມກັນຂອງກຸ່ມທີ່ມີຄວາມອ່ອນໄຫວ ໃນຂະບວນການຕັດສິນໃຈ ແລະ ການມີສ່ວນຮ່ວມໃນກິດຈະກໍາຂອງໂຄງການ, ຂໍ້ຈໍາກັດໃນການເຂົ້າເຖິງຊັບພະຍາກອນ, ຜົນກະທົບຕໍ່ສິດໃນການຄອບຄອງທີ່ດິນແບບດັ້ງເດີມ, ແລະ ການປ່ຽນແປງໂອກາດທາງເສດຖະກິດເນື່ອງຈາກການຈັດການກ່ຽວກັບສິດໃນການຄອບຄອງທີ່ດິນເພື່ອຈຸດປະສົງດ້ານການອະນຸລັກ.

ດ້ວຍເຫດນັ້ນ, ໂຄງການຈະກໍານົດມາດຕະການ ແລະ ກິດຈະກໍາຕາມລໍາດັບການຫຼຸດຜ່ອນຜົນກະທົບເພື່ອຫຼີກລ້ຽງ, ຫຼື ໃນກໍລະນີທີ່ບໍ່ສາມາດຫຼີກລ້ຽງໄດ້, ການຫຼຸດຜ່ອນຜົນກະທົບດ້ານລົບທາງສັງຄົມ ແລະ ສິ່ງແວດລ້ອມທີ່ອາດເກີດຂຶ້ນໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ ໂດຍ (a) ການລະບຸ ແລະ ສະຫຼຸບຜົນກະທົບດ້ານລົບທາງສັງຄົມ ແລະ ສິ່ງແວດລ້ອມທີ່ຄາດວ່າຈະເກີດຂຶ້ນທັງໝົດ; (b) ການອະທິບາຍລາຍລະອຽດດ້ານວິຊາການສໍາລັບແຕ່ລະມາດຕະການຫຼຸດຜ່ອນຜົນກະທົບ; (ຄ) ການປະເມີນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມທີ່ອາດເກີດຂຶ້ນຈາກມາດຕະການເຫຼົ່ານີ້ ແລະ ຜົນກະທົບສຸດທ້າຍຫຼັງຈາກການຫຼຸດຜ່ອນຜົນກະທົບ; ແລະ (c) ການພິຈາລະນາ ແລະ ການຮັບປະກັນໃຫ້ສອດຄ່ອງກັບແຜນການຫຼຸດຜ່ອນຜົນກະທົບອື່ນ ທີ່ກໍານົດໄວ້.

ນອກຈາກນີ້, ໂຄງການ CARBS ຈະສ້າງແຜນການສໍາລັບຊົນເຜົ່າພື້ນເມືອງ (IPP) ຫລື ແຜນພັດທະນາຊົນເຜົ່າໂດຍອີງໃສ່ຂັ້ນຕອນຕໍ່ໄປນີ້:

- ການລະບຸກຸ່ມຊົນເຜົ່າພື້ນເມືອງ (ຊົນເຜົ່າ) ຜ່ານການກວດກາ;
- ການປະເມີນຜົນກະທົບຈາກໂຄງການ;
- ການປຶກສາຫາລືກັບຊຸມຊົນຊົນເຜົ່າພື້ນເມືອງ ຫລື ຊົນເຜົ່າ ທີ່ໄດ້ຮັບຜົນກະທົບ ຕາມຫຼັກການ FPIC ແລະ ໄດ້ຮັບການສະໜັບສະໜູນຢ່າງກວ້າງຂວາງຈາກຊຸມຊົນ;
- ການສ້າງແຜນ IPP ເພື່ອຫຼີກເວັ້ນຜົນກະທົບດ້ານລົບ ແລະ ສ້າງຜົນປະໂຫຍດທີ່ເໝາະສົມທາງດ້ານວັດທະນະທໍາ; ແລະ
- ສໍາລັບກິດຈະກໍາທີ່ບໍ່ມີຜົນກະທົບ, ຂໍ້ກໍານົດອາດຈະຈໍາກັດພຽງແຕ່ການປຶກສາຫາລືໃນລະຫວ່າງການປະຕິບັດໂຄງການ ເພື່ອໃຫ້ຊົນເຜົ່າແລະ ຊຸມຊົນທ້ອງຖິ່ນ ໄດ້ຮັບຂໍ້ມູນກ່ຽວກັບກິດຈະກໍາຂອງໂຄງການ ແລະ ເກັບກໍາຂໍ້ມູນການປຶກສາຫາລືທັງໝົດທີ່ໄດ້ຈັດຂຶ້ນ.

ເນື້ອໃນຂອງແຜນ IPP ຈະຕ້ອງປະກອບດ້ວຍຂໍ້ມູນຕໍ່ໄປນີ້:

• ຄໍາອະທິບາຍກ່ຽວກັບຊົນເຜົ່າພື້ນເມືອງ ຫລື ຊົນເຜົ່າ ທີ່ໄດ້ຮັບຜົນກະທົບຈາກກິດຈະກໍາທີ່ສະເໜີ;

• ບົດສະຫຼຸບກິດຈະກໍາທີ່ສະເໜີ;

• ຄໍາອະທິບາຍລາຍລະອຽດກ່ຽວກັບຂະບວນການມີສ່ວນຮ່ວມ ແລະ ການປຶກສາຫາລືກັບຊົນເຜົ່າພື້ນເມືອງໃນລະຫວ່າງການປະຕິບັດໂຄງການ;

• ຄໍາອະທິບາຍວິທີທີ່ໂຄງການຈະຮັບປະກັນຜົນປະໂຫຍດທີ່ເໝາະສົມທາງດ້ານວັດທະນະທໍາ ແລະ ຫຼີກລ້ຽງ ຫຼືຫຼຸດຜ່ອນຜົນກະທົບດ້ານລົບ;

• ງົບປະມານ;

• ກົນໄກສໍາລັບການຮ້ອງທຸກ ແລະ ການແກ້ໄຂຂໍ້ຂັດແຍ່ງ; ແລະ

• ລະບົບການຕິດຕາມ ແລະ ປະເມີນຜົນ ເຊິ່ງລວມເຖິງການຕິດຕາມບັນຫາ ແລະ ມາດຕະການສະເພາະທີ່ກ່ຽວຂ້ອງກັບຊຸມຊົນຊົນເຜົ່າ.

**ໂຄງກອບການເຫັນດີແບບເສລີ ລ່ວງໜ້າ ແລະ ໂດຍມີຂໍ້ມູນຄວາມຮູ້ (FPIC)**

ຂະບວນການປຶກສາຫາລື ແລະ ຫຼັກການ FPIC ຈະຖືກນໍາໃຊ້ກັບທຸກດ້ານ ຫລື ກິດຈະກໍາ ຂອງໂຄງການ (ທີ່ໄດ້ຮັບທຶນຊ່ວຍເຫຼືອຈາກ WWF) ທີ່ອາດຈະມີຜົນກະທົບໃນທາງລົບຕໍ່ສິດທິຂອງຊົນເຜົ່າ. ຫຼັກການ FPIC ຈະຖືກຈັດຕັ້ງປະຕິບັດໃນທຸກກິດຈະກໍາທີ່ອາດຈະມີຜົນກະທົບໃນທາງລົບຕໍ່ສິດທິ, ຜົນປະໂຫຍດ, ນໍ້າ, ທີ່ດິນ, ຊັບພະຍາກອນ, ເຂດແດນ (ບໍ່ວ່າຈະມີໃບທີ່ດິນ ຫຼື ບໍ່ມີໃຫ້ແກ່ປະຊາກອນທີ່ກ່າວມາ) ແລະ ການດໍາລົງຊີວິດແບບດັ້ງເດີມຂອງຊົນເຜົ່າທີ່ກ່ຽວຂ້ອງ.

ດ້ວຍເຫດນັ້ນ, FPIC ຈຶ່ງເປັນສ່ວນສໍາຄັນຂອງການດໍາເນີນໂຄງການ CARBS, ເນື່ອງຈາກພື້ນທີ່ໂຄງການລວມມີຊຸມຊົນຊົນເຜົ່າຕ່າງໆ. WWF ຮັບຮູ້ຄວາມຜູກພັນດ້ານວັດທະນະທໍາ ແລະ ຈິດວິນຍານອັນເຂັ້ມແຂງທີ່ຊົນເຜົ່າຕ່າງໆ ມີຕໍ່ດິນແດນ ແລະ ພູມລໍາເນົາຂອງພວກເຂົາ ແລະ ມີພັນທະສົມທົບທີ່ຈະເສີມສ້າງຄວາມຜູກພັນເຫຼົ່ານີ້ໃນທຸກໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອຈາກ WWF/GEF/GCF. FPIC ເຮັດໃຫ້ຊົນເຜົ່າມີເສລີພາບໃນການກໍານົດເສັ້ນທາງການພັດທະນາຂອງຕົນເອງ ແລະ ການອະນຸລັກສິ່ງມີຊີວິດຫຼາກຫຼາຍ.

ກົມຊັບພະຍາກອນນໍ້າ ຂອງ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ພາກສ່ວນທີ່ກ່ຽວຂ້ອງລະດັບແຂວງ ຈະຕ້ອງຮັບປະກັນການສະໜອງທຶນທີ່ພຽງພໍ ສໍາລັບການປຶກສາຫາລື ແລະ ການສະໜັບສະໜູນກິດຈະກໍາຕ່າງໆ ທີ່ວາງແຜນໄວ້ໃນແຜນ IPP. ແຜ່ນພັບຂໍ້ມູນ ທີ່ປະກອບດ້ວຍຂໍ້ມູນພື້ນຖານ ເຊັ່ນ: ສະຖານທີ່

ຂອງໂຄງການຍ່ອຍ, ການຄາດຄະເນຜົນກະທົບ, ແລະ ມາດຕະການຫຼຸດຜ່ອນຜົນກະທົບທີ່ໄດ້ສະເໜີ, ແລະ ແຜນປະຕິບັດງານ ຈະຖືກຈັດຕັ້ງຂຶ້ນ, ແປເປັນພາສາທີ່ຊຸມຊົນເຜົ່າເຂົ້າໃຈ, ແລະ ແຈກຢາຍໃຫ້ແກ່ພວກເຂົາ.

**ການຈັດຕັ້ງການບໍລິຫານ**

ກົມຊັບພະຍາກອນນ້ຳ ຢູ່ພາຍໃຕ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ໃນປັດຈຸບັນແມ່ນ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ກສສ) ເຮັດໜ້າທີ່ເປັນໜ່ວຍງານຈັດຕັ້ງປະຕິບັດຫຼັກ, ປະສານງານຜ່ານ ຫນ່ວຍງານບໍລິຫານໂຄງການ (PMU) ທີ່ໄດ້ຮັບການສະໜັບສະໜູນຈາກ WWF-Laos. WWF-US ໃຫ້ການ ຄຸ້ມຄອງທຶນ ແລະ ຮັບປະກັນການປະຕິບັດຕາມວຽກງານປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ. ຄະນະຊີ້ນຳໂຄງການ (PSC) ຮັບປະກັນການປະສານງານດ້ານນະໂຍບາຍ ແລະ ການປະສານງານລະຫວ່າງພາກສ່ວນທີ່ກ່ຽວຂ້ອງ. ຄະນະ PSC ຈະປະກອບດ້ວຍຜູ້ຕາງໜ້າລັດຖະບານຈາກລະດັບສູນກາງ (ກະຊວງ ແລະ ກົມ) ແລະ ທ້ອງຖິ່ນ (ແຂວງ ແລະ ເມືອງ) ພ້ອມດ້ວຍ WWF ໃນບົດບາດຜູ້ສັງເກດການ, ໃນຂະນະທີ່ ຫນ່ວຍງານບໍລິຫານໂຄງການ (MPU) ປະຕິບັດໜ້າທີເປັນກອງເລຂາໃຫ້ຄະນະ PSC ດັ່ງທີ່ສະແດງໃນແຜນວາດໂຄງຮ່າງການຈັດຕັ້ງຂ້າງລຸ່ມນີ້.




ຮູບທີ 2: ລະບົບໂຄງຮ່າງການຈັດຕັ້ງສຳລັບໂຄງການ

ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ ໃຫ້ມີປະສິດທິຜົນ, ໂຄງການຈະມີການຮ່ວມມືກັບອົງກອນຈັດຕັ້ງປະຕິບັດໂຄງການ GEF WWF ຂອງ WWF-US ເພື່ອໃຫ້ການກວດກາການປະຕິບັດໂຄງການໂດຍລວມ ໃນຂະນະທີ່ GEF ດຳເນີນການ. ຄະນະ PSC ຈະຮັບປະກັນວ່າການຈັດຕັ້ງປະຕິບັດໂຄງການສອດຄ່ອງກັບຂໍ້ກຳນົດ ແລະ ມາດຕະຖານແຫ່ງຊາດ ແລະ GEF. ໜ່ວຍງານຈັດຕັ້ງປະຕິບັດ GEF (ກົມຊັບພະຍາກອນນ້ຳ ແລະ ພາກສ່ວນກະສິກຳ ແລະ ສິ່ງແວດລ້ອມລະດັບແຂວງ) ເປັນບອນເຮັດວຽກຂອງຫນ່ວຍງານບໍລິຫານໂຄງການ (PMU) ເຊິ່ງຈະ (1) ຮັບປະກັນການກວດກາ ແລະ ປະສານງານໂຄງການ ສຳລັບການຈັດຕັ້ງປະຕິບັດຕາມພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ຢ່າງມີປະສິດທິຜົນ ແລະ ກົງຕໍ່ເວລາ ຕາມແຜນການຈັດການດ້ານສິ່ງແວດລ້ອມ, (2) ສະເໜີຜົນໄດ້ຮັບຂອງໂຄງການໃຫ້ສອດຄ່ອງກັບມາດຕະຖານໂຄງການ WWF/GEF; ແລະ (3) ການພັດທະນາ ແລະ ຈັດການແຜນວຽກລາຍລະອຽດ ແລະ ກຳນົດເວລາຂອງໜ້າວຽກຕ່າງໆ. ການຈັດຕັ້ງປະຕິບັດວຽກງານສິ່ງແວດລ້ອມ ແລະ ສັງຄົ ຈະໄດ້ຮັບການສະໜັບສະໜູນຈາກຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ແລະ ບົດບາດຍິງ-ຊາຍ ພາຍໃນໜ່ວຍງານ MPU. ຜູ້ຊ່ຽວຊານຈະມີຄວາມຮັບຜິດຊອບລວມ, ລວມທັງການຕິດຕາມ ແລະ ລາຍງານປົກກະຕິ, ເພື່ອຮັບປະກັນການປະຕິບັດຕາມຂໍ້ກຳນົດດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ເອກະສານຕິດຄັດທີ່ກ່ຽວຂ້ອງ.

ການປະຕິບັດຕາມ ESMF ຂອງກິດຈະກຳໂຄງການ ຈະໄດ້ຮັບການຕິດຕາມຢ່າງເຂັ້ມງວດຕະຫຼອດໄລຍະເວລາການຈັດຕັ້ງປະຕິບັດໂຄງການ. ການຕິດຕາມຈະດຳເນີນໄປໃນສາມລະດັບ (ໂຄງການ, ກິດຈະກຳ ແລະ ອົງກອນ) ເພື່ອຮັບປະກັນວ່າກິດຈະກຳທັງໝົດສອດຄ່ອງກັບມາດຕະຖານ ແລະ ແນວທາງທີ່ກຳນົດສຳລັບວຽກງານດ້ານສິ່ງແວດລ້ອມ ແລະ ສັງຄົມ ຕະຫຼອດໄລຍະເວລາຂອງໂຄງການ.

**ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ**

ເອກະສານແຜນການມີສ່ວນຮ່ວມ (SEP) ທີ່ແຍກຕ່າງຫາກ ໄດ້ຖືກຮ່າງຂຶ້ນສຳລັບໂຄງການອ່າງຮັບນ້ຳ ທີ່ສາມາດປັບໂຕ ຕໍ່ການປ່ຽນແປງດິນຟ້າອາກາດ ໃນແຂວງ ໄຊຍະບູລີ CARBS. ແຜນ SEP ດັ່ງກ່າວ ໃຫ້ແນວທາງກ່ຽວກັບວິທີການການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຕະຫຼອດໄລຍະຂອງໂຄງການ. ເປົ້າໝາຍຫຼັກຂອງ SEP ແມ່ນ ເພື່ອສ້າງທາງເລືອກທີ່ມີລະບົບ ເພື່ອຊ່ວຍໂຄງການໃນ: i) ການລະບຸພາກສ່ວນທີ່ກ່ຽວຂ້ອງ ແລະ ສ້າງ ແລະ ຮັກສາສາຍພົວພັນທີ່ສ້າງສັນກັບພວກເຂົາ; ແລະ ii) ການປະເມີນລະດັບຄວາມສົນໃຈ ແລະ ການສະໜັບສະໜູນຈາກພາກສ່ວນທີ່ກ່ຽວຂ້ອງຕໍ່ໂຄງການ ແລະ ເພື່ອໃຫ້ຄວາມຄິດເຫັນຂອງພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບການພິຈາລະນາ ໃນການອອກແບບໂຄງການ ແລະ ຜົນງານດ້ານສິ່ງແວດລ້ອມ ແລະ ສັງຄົມ.

ແຜນ SEP ຖືກຮ່າງຂຶ້ນ ແລະ ຈະຖືກຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບ ກົດໝາຍ ແລະ ຂໍ້ກຳນົດທີ່ກ່ຽວຂ້ອງຂອງ ສປປ ລາວ, ລວມທັງ ກົດໝາຍວ່າດ້ວຍການປົກປ້ອງສິ່ງແວດລ້ອມ, ແລະ ແນວທາງກ່ຽວກັບການປຶກສາຫາລືກັບ

ກຸ່ມຊົນເຜົ່າ, ນະໂຍບາຍຂອງ GEF ກ່ຽວກັບການມີສ່ວນຮ່ວມຂອງສາທາລະນະໃນໂຄງການ GEF ແລະ ຂໍ້ກຳນົດການດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ ອົງການກອງທຶນອະນຸລັກທຳມະຊາດໂລກ WWF.

ອີງຕາມແຜນ SEP, ພາກສ່ວນທີ່ກ່ຽວຂ້ອງຂອງໂຄງການ ລວມມີ: ຫ້ອງການລັດຖະບານຂັ້ນສູນກາງ ແລະ ທ້ອງຖິ່ນ, ຊຸມຊົນໃນ 18 ບ້ານທີ່ໄດ້ຮັບຜົນປະໂຫຍດ ແລະ ຊຸມຊົນທີ່ອາດໄດ້ຮັບຜົນກະທົບທາງລຸ່ມຂອງສາຍນ້ຳຂອງກິດຈະກຳໂຄງການ ໃນ ເມືອງເປົ້າໝາຍ (ທົ່ງສາ, ໄຊສະຖານ, ພຽງ, ປາກລາຍ, ທົ່ງມີໄຊ, ແລະ ໄຊຍະບູລີ) ຂອງແຂວງໄຊຍະບູລີ, ອົງການຈັດຕັ້ງສັງຄົມ, ທີມງານທີ່ໃຫ້ການປຶກສາທາງດ້ານວິຊາການ ແລະ ບໍລິການທ້ອງຖິ່ນ, ແລະ ພາກສ່ວນທີ່ສົນໃຈອື່ນໆ. ໃນລະຫວ່າງການກະກຽມ SEP, ທີມງານໂຄງການ ໄດ້ຈັດການປຶກສາຫາລືກັບພາກສ່ວນຕ່າງໆ ຢ່າງຕໍ່ເນື່ອງ ກັບອົງການຈັດຕັ້ງລັດຖະບານໃນລະດັບສູນກາງ ແລະ ທ້ອງຖິ່ນ, ຄູ່ຮ່ວມພັດທະນາໃນ ສປປ ລາວ, ກຸ່ມອົງກອນສັງຄົມ, ແລະ ຊຸມຊົນທ້ອງຖິ່ນ.

ໂຄງການຮັບປະກັນການມີສ່ວນຮ່ວມແບບເປີດກ້ວາງໃຫ້ພາກສ່ວນທີ່ກ່ຽວຂ້ອງ, ລວມທັງຊຸມຊົນເປົ້າໝາຍ ຜ່ານການປຶກສາຫາລືຢ່າງຕໍ່ເນື່ອງ, ການສື່ສານທີ່ເໝາະສົມທາງວັດທະນະທຳ, ແລະ ຜ່ານກົນໄກ FPIC ຕະຫຼອດໄລຍະໂຄງການ. ໂຄງການຈະເປີດເຜີຍບົດສະຫຼຸບນີ້ ແລະ ຂໍ້ມູນໂຄງການອື່ນໆ ໃຫ້ແກ່ຊຸມຊົນທ້ອງຖິ່ນເປົ້າໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນຮູບແບບທີ່ງ່າຍຕໍ່ການເຂົ້າໃຈ, ລວມທັງ ການນຳສະເໜີ ບົດສະເໜີ ແລະ ແຜ່ນພັບຂໍ້ມູນ. ເອກະສານເຫຼົ່ານີ້ ຈະຖືກແປເປັນພາສາລາວ ແລະ ນຳສະເໜີໃຫ້ແກ່ຊຸມຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນ ກອງປະຊຸມ (ອາດຈະມີການແປເປັນພາສາຊົນເຜົ່າສ່ວນນ້ອຍ, ຖ້າຫາກຈຳເປັນ).

ພ້ອມດຽວກັນນັ້ນ, ບົດສະຫຼຸບເອກະສານ ESS ທີ່ແປແລ້ວ ຈະຖືກເກັບໄວ້ ຢູ່ຈຸດສຳຄັນຕ່າງໆ ຂອງໂຄງການ ພ້ອມທັງລົງໃນເວັບໄຊທ໌ຂອງ WWF-Laos. ບົດສະຫຼຸບດັ່ງກ່າວ ຍັງຈະຕ້ອງເຂົ້າເຖິງໄດ້ງ່າຍ ສຳລັບພາກສ່ວນທີ່ກ່ຽວຂ້ອງ ຜ່ານ ກອງປະຊຸມ ເພື່ອເຜີຍແຜ່ຂໍ້ມູນນີ້ ແລະ ເກັບກຳຄຳຄິດເຫັນທີ່ໄດ້ຮັບ.

**ກົນໄກການແກ້ໄຂຄຳຮ້ອງທຸກ**

ໂຄງການຈະມີຜົນກະທົບໂດຍກົງ ແລະ ຊັດເຈນ ຕໍ່ຊຸມຊົນທ້ອງຖິ່ນ ແລະ ບຸກຄົນທີ່ອາໄສຢູ່ໃນ ຫຼື ໃກ້ຄຽງກັບພື້ນທີ່ໂຄງການ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນທີ່ຕ້ອງມີ ກົນໄກການແກ້ໄຂຄຳຮ້ອງທຸກ (GRM) ທີ່ມີປະສິດທິຜົນ ແລະ ມີປະສິດທິພາບ ເພື່ອຮັບຟັງ ແລະ ຕອບສະໜອງ ຕໍ່ການສອບຖາມ, ຂໍ້ສະເໜີ ຫລື ຄວາມຄິດເຫັນ, ຄວາມກັງວົນ, ແລະ ຄຳຮ້ອງທຸກຈາກພາກສ່ວນທີ່ກ່ຽວຂ້ອງ. GRM ອະນຸຍາດໃຫ້ບຸກຄົນທີ່ໄດຮັບຜົນກະທົບ ຍື່ນຄຳຮ້ອງທຸກທີ່ກ່ຽວຂ້ອງກັບບັນຫາດ້ານສິ່ງແວດລ້ອມ, ສັງຄົມ, ຫຼື ຈັນຍາບັນ ທີ່ກ່ຽວພັນກັບໂຄງການ. ກົນໄກດັ່ງກ່າວ ຮັບປະກັນຄວາມລັບ, ການເຂົ້າເຖິງໄດ້ງ່າຍ, ແລະ ການຕອບສະໜອງຢ່າງທັນເວລາ, ພ້ອມດ້ວຍກຳນົດສຳລັບການຈັດການກໍລະນີ SEAH ແລະ ການລາຍງານໃຫ້ແກ່ ພະນັກງານຮັບຄຳຮ້ອງທຸກກ່ຽວກັບໂຄງການ ຂອງ ອົງການກອງທຶນອະນຸລັກທຳມະຊາດໂລກ WWF.

ນອກຈາກ GRM ສະເພາະໂຄງການແລ້ວ, ຜູ້ຮ້ອງທຸກ ສາມາດສົ່ງຄຳຮ້ອງທຸກໄປຍັງ ອົງກອນ GEF-WWF. ຄຳຮ້ອງທຸກ ຍັງສາມາຍຖືກຍື່ນໄປຫາ ພະນັກງານຮັບຄຳຮ້ອງທຸກໂຄງການ (PCO), ເຊິ່ງເປັນພະນັກງານຂອງ ອົງການກອງທຶນອະນຸລັກທຳມະຊາດໂລກ WWF ທີ່ເປັນອິດສະຫຼະຢ່າງສິ້ນເຊີງຈາກທີມງານໂຄງການ, ໂດຍຜູ້ຮັບຜິດຊອບຕໍ່ ກົນໄກການຮັບຜິດຊອບ ແລະ ການແກ້ໄຂຄຳຮ້ອງທຸກ ຂອງ ອົງການກອງທຶນອະນຸລັກທຳມະຊາດໂລກ WWF ແລະ ສາມາດຕິດຕໍ່ໄດ້ທີ່:

ອີເມວ: SafeguardsComplaint@wwfus.org

ທີ່ຢູ່:

Project Complaints Officer
Safeguards Complaints,
World Wildlife Fund
1250 24th Street NW
Washington, DC 20037

ພາກສ່ວນທີ່ກ່ຽວຂ້ອງ ຍັງສາມາດສົ່ງຄຳຮ້ອງທຸກ ຜ່ານອອນລາຍ ໂດຍຜ່ານເວັບໄຊທ໌ ຂອງພາກສ່ວນທີ່ສາມທີ່ເປັນອິດສະຫຼະ ທີ່:

https://secure.ethicspoint.com/domain/media/en/gui/59041/index.html